ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LAO ASEAN LEASING PUBLIC COMPANY

ເລກທີ. 9100
ນະຄອນຫຼວງວຽງຈັນ, ວັນທີ: 18 ພຶດສະພາ 2023

ຮຽນ: - ທ່ານ ຫົວໜ້າ ສານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງວັນທີ 18 ພຶດສະພາ 2023

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດຂໍແຈ້ງມະຕິສຳຄັນ ຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 18 ພຶດສະພາ 2023 ດັ່ງມີລາຍລະອຽດລຸ່ມນີ້:

1. ຮັບຮອງວາລະກອງປະຊຸມຜູ້ຖືຮຸ້ນປີ 2022 ຄືນໃໝ່ ຊຶ່ງມີລາຍລະອຽດ ດັ່ງນີ້:

ວາລະທີ່ 1: ອະນຸມັດ ບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດລາຍງານການເງິນປີ 2022 ເຊິ່ງໄດ້ຜ່ານການກວດສອບ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນໃຫ້ ພິຈາລະນາ ແລະ ຮັບຮອງ.

ວາລະທີ່ 2: ອີງຕາມກອງປະຊຸມສະພາບໍລິຫານຄັ້ງວັນທີ 15 ສິງຫາ 2022 ແລະ ກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຂອງບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ ຊຶ່ງ ອະນຸມັດຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ໃນໄລຍະຜ່ານມາ ຮອດທ້າຍ ປີ2021 ຈຳນວນ 570,027,606,419 ກີບ. ຈາກການປະຕິບັດຕົວຈິງ, ສະພາບໍລິຫານເຫັນດີອະນຸມັດຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ໃນໄລຍະຜ່ານມາ ຮອດທ້າຍ ປີ 2021 ຈຳນວນ 17,185,500,000ກີບ, ເງິນປັນຜົນຕໍ່ຮຸ້ນ 57 ກີບ, ໃນວັນທີ30 ມິຖຸນາ ປີ 2023. ສ່ວນທີ່ເຫຼືອແມ່ນຈະນຳໃຊ້ເປັນທຶນຂະຫຍາຍທຸລະກິດ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.

ວາລະທີ່ 3: ອະນຸມັດບໍ່ຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2022 ເພື່ອນຳໃຊ້ເປັນກອງທຶນໃນທຸລະກິດ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.

ວາລະທີ່ 4: ອະນຸມັດແຜນທຸລະກິດຂອງ ລອຊ ສຳລັບປີ 2023 ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.

ວາລະທີ 5: ອະນຸມັດການແຕ່ງຕັ້ງທ່ານ Yoshihito Oshima ເປັນສະມາຊິກສະພາບໍລິຫານ, ເປັນ ປະທານເຈົ້າໜ້າທີ່ບໍລິຫານ, ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ, ເປັນຕົວແທນທາງດ້ານກົດໝາຍ (ອອກຊື່ໃນໃບທະບຽນວິສາຫະກິດ) ແລະ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ ແລະ **ຍົກເລີກການຮອງຜູ້ອຳນວຍການຝ່າຍການເງິນແທນທ່ານ** Takuro Nishida.

ວາລະທີ 6: ອະນຸມັດການແຕ່ງຕັ້ງທ່ານ ຫວຽດ ວົງຖາວອນ ເປັນຮອງຜູ້ອຳນວຍການຝ່າຍດຳເນີນງານແທນ ທ່ານ Morikawa Kazutaka ແລະ ເປັນ ສະມາຊິກ ສະພາບໍລິຫານຄົນໃໝ່.

ວາລະທີ 7: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບປະຈຳປີ 2023 ແລະ ກຳນົດຄ່າບໍລິການກວດສອບ ເພື່ອສະ ເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.

ວາລະທີ 8: ພິຈາລະນາຮັບຮອງເອົາ ແລະ ອະນຸມັດການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 10,000,000,000-30,000,000,000 ກີບ ແລະ 10,000,000-30,000,000ໂດລາ ໂດຍ

ມອບໃຫ້ ສະພາບໍລິຫານ ຫຼື ຜູ້ທີ່ໄດ້ຮັບແຕ່ງຕັ້ງຈາກສະພາບໍລິຫານເປັນຜູ້ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານການກູ້ຢືມນີ້.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາ ຊຽນ ເຊົ່າສິນເຊື່ອ ມະຫາຊົນ
LAO ASEAN LEASING PUBLIC COMPANY

ທ່ານ Yoshihito Oshima